
ນັກຮົບແຫ່ງ
ການອະທິຖານ
ບົດຮຽນທີ 6 ສຳລັບສະບາໂຕທີ 9, 2026


“ຂ້ານ້ອຍຮັກພຣະເຈົ້າຢາເວ ເພາະພຣະອົງໄດ້ຍິນສຽງຂອງຂ້ານ້ອຍ
ຮ້ອງຫາ ພຣະອົງຊົງຟັງຄຳພາວັນນາອະທິຖານຂອງຂ້ານ້ອຍ, ພຣະອົງຟັງ
ຂ້ານ້ອຍທຸກໆເທື່ອ ເມື່ອຂ້ານ້ອຍຮ້ອງຫາພຣະອົງ” (ພສສ 116:1, 2)



ສິ່ງທີ່ມີຊີວິດທັງໝົດລວມເຖິງມະນຸດ, ຖືກສ້າງຂື້ນໂດຍພຣະເຈົ້າ ດ້ວຍຄວາມສາມາດໃນການສື່ສານລະຫວ່າງເຊິ່ງກັນແລະກັນກັບພຣະອົງ.



ເປັນຕາເສຍດາຍທີ່ມະນຸດສູນເສຍຄວາມສາມາດໃນການສື່ສານໂດຍກົງກັບພຣະເຈົ້າໄປ ຕອນທີ່ອາດາມ ແລະ ເອວາໄດ້ເຮັດບາບ

ແຕ່ພຣະເຈົ້າຊົງປະຂອງຂວັນໄວ້ໃຫ້ແກ່ພວກເຮົາ "ໂທລະສັບ" ທີ່ອະນຸຍາດໃຫ້ພວກເຮົາໄດ້ສື່ການກັບພຣະອົງຜ່ານທາງ "ການອະທິຖານ"

ດານີເອນ, ເອນົກ, ແລະ ໂມເຊ ແມ່ນຕົວຢ່າງສຳລັບພວກເຮົາໃນການໃຊ້ຂອງຂວັນອັນຊົງພະລັງນີ້.







ດານີເອນ:
- ອະທິຖານໃນເວລາທີ່ອັນຕະລາຍ
- ອະທິຖານດ້ວຍທ່າທາງທີ່ຖືກຕ້ອງ

ເອນົກ:
- ຊີວິດແຫ່ງການອະທິຖານ

ໂມເຊ:
- ໂອ້ລົມກັບພຣະເຈົ້າ
- ອະທິຖານວິງວອນຕໍ່ພຣະອົງ



# ດານິເອນ

# ອະທິຖານໃນເວລາທີ່ອັນຕະລາຍ

"ຂ້າພະເຈົ້າຕັ້ງໜ້າພາວັນນາອະທິຖານຂໍຕໍ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຖືສິນອົດອາຫານ, ນຸ່ງເສື້ອຜ້າກະສອບເຂົ້າ ແລະ ນັ່ງໃນຂີ້ເຖົ່າໄຟ" *(ດນອ 9:3)*



ເພາະຄວາມໄວ້ວາງໃຈໃນພຣະເຈົ້າ, ດານີເອນຈຶ່ງໄດ້ຮັບສະຕິປັນຍາ, ຄວາມສາມາດໃນການແປຄວາມຝັນ, ແລະ ຄວາມສະຫຼຽວສະຫລາດ (ດນອ. 1:8, 17, 20). ເມື່ອຊີວິດຂອງລາວ ແລະ ໝູ່ຕົກຢູ່ໃນອັນຕະລາຍ, ລາວກໍໄດ້ຫັນໄປຫາພຣະເຈົ້າດ້ວຍການອະທິຖານ(ດນອ. 2:17-23).

ຫລັງຈາກການໃຊ້ຊີວິດດ້ວຍການອະທິຖານ ດານີເນໄດ້ຮັບຄຸນລັກສະນະແນວໃດແດ່? (ດນອ. 6:3-5)?

- ຜູ້ບໍລິຫານທີ່ດີ
- ເປັນຄົນຊື່ສັດ
- ເປັນຄົນຂະຫຍັນ
- ບໍ່ສາມາດເອົາຜິດໃສ່ໄດ້
- ມີຄວາມຮັບຜິດຊອບ
- ຮັບກຽດຕິຍົດ
- ຈົງຮັກພັກດີ
- ບໍ່ມີນິໄສທີ່ບໍ່ດີ



(ຈາກຫົວຂໍ້ທີ່ຜ່ານມາ) ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ

## ຫລັງຈາກການໃຊ້ຊີວິດດ້ວຍການອະທິຖານ ດານີເນໄດ້ຮັບຄຸນລັກສະນະແນວໃດແດ່? (ດນອ. 6:3-5)?

ເປັນຜູ້ບໍລິຫານທີ່ດີ

ເປັນຄົນທີ່ຊັດສື່

ເປັນຄົນທີ່ຂະຫຍັນ

ບໍ່ສາມາດຖືກໄຟໄໝ້ໄດ້

ມີຄວາມຮັບຜິດຊອບ

ໄດ້ຮັບກຽດຕິຍົດ

ຊື່ສັດ ແລະ ຈົງຮັກພັກດີ

ບໍ່ມີນິໄສທີ່ບໍ່ດີ

# ອະທິຖານໃນເວລາທີ່ອັນຕະລາຍ

"ຂ້າພະເຈົ້າຕັ້ງໜ້າພາວັນນາອະທິຖານຂໍຕໍ່ອົງພຣະຜູ້ເປັນເຈົ້າ ພຣະເຈົ້າຖືສິນອົດອາຫານ, ນຸ່ງເສື້ອຜ້າກະສອບເຂົ້າ ແລະ ນັ່ງໃນຂີ້ເຖົ່າໄຟ" *(ດນອ 9:3)*

ສະຫວັນໄດ້ຮັບຟັງຄຳອະທິຖານຂອງດານີເອນ (ດນອ 9:20-23; 10:12). ມີພຽງແຕ່ການຫາເລື່ອງມາຕໍ່ສູ້ກົດບັນຍັດຂອງພຣະເຈົ້າເທົ່ານັ້ນທີ່ສາມາດທຳລາຍລາວໄດ້ (ດນອ. 6:5-7).





ເມື່ອຜະເຊີນກັບໄພຄຸກຄາມເຖິງຊີວິດຄັ້ງໃໝ່ນີ້, ດານີເອນກໍ່ຍັງຄົງຮັກສາການອະທິຖານຂອງລາວຕໍ່ໄປໄວ້ໄດ້ (ດນອ. 6:10):





ລາວມີຄວາມສະໝໍ່າສະເໝີ ອະທິຖານ 3 ຄັ້ງຕໍ່ມື້



ເປັນສິ່ງທີ່ຮູ້ໄດ້ເລີຍວ່າລາວຈະເປີດໜ້າຕ່າງອອກເພື່ອອະທິຖານ



ສິ່ງທີ່ລາວເຮັດເປັນທຳນຽມແມ່ນຄຸເຂົ່າອະທິຖານ



ເນັ້ນທີ່ການຂອບພຣະຄຸນ ແລະ ການວິງວອນ

# ອະທິຖານດ້ວຍທ່າທາງທີ່ຖືກຕ້ອງ

"ເມື່ອດານີເອນຮູ້ວ່າໜັງສືຄຳສັ່ງໄດ້ເຊັນລົງໄປແລ້ວ ເພິ່ນກໍກັບຄືນເມືອເຮືອນຂອງຕົນ. ໃນຫ້ອງຊັ້ນເທິງຂອງເຮືອນນັ້ນມີປ່ອງຢ້ຽມຢູ່ສາມປ່ອງປີ້ນໜ້າໃສ່ນະຄອນເຢຣູຊາເລັມ. ຢູ່ທີ່ນັ້ນ ດັ່ງທີ່ເຄີຍປະຕິບັດມາ ດານີເອນໄດ້ຄຸເຂົ່າລົງຕໍ່ໜ້າປ່ອງຢ້ຽມທີ່ໄຂໄວ້. ພາວັນນາອະທິຖານ ແລະ ໂມທະນາຂອບພຣະຄຸນຕໍ່ພຣະເຈົ້າຂອງເພິ່ນ ວັນລະສາມເທື່ອ ດັ່ງທີ່ເພິ່ນເຄີຍປະຕິບັດມາແຕ່ກ່ອນ" (ດນອ 6:10)



ເມື່ອພວກເຮົາອະທິຖານ ພວກເຮົາເວົ້າກັບພຣະເຈົ້າດັ່ງເວົ້າກັບໝູ່ເພື່ອນ ແຕ່ຢ່າງໃດກໍ່ຕາມພຣະເຈົ້າບໍ່ຄືກັບພວກເຮົາ ພຣະອົງຊົງເປັນພຣະຣາຊາແຫ່ງຈັກກະວານ.

ດ້ວຍເຫດນີ້ ທ່ານຽມຂອງດານີເອນ ຈຶ່ງແມ່ນການຄຸເຂົ່າລົງຕໍ່ໜ້າພຣະອົງເພື່ອອະທິຖານ, ຍອມຮັບວ່າພຣະອົງຊົງເປັນຜູ້ປົກຄອງສູງສຸດ.

ເນື່ອງຈາກພວກເຮົາສາມາດອະທິຖານຕໍ່ພຣະເຈົ້າໄດ້ໃນທຸກໆສະຖານະການ ແລະ ທຸກໆເວລາ, ພວກເຮົາຈຶ່ງສາມາດເຮັດແບບນີ້ໄດ້ອີງຕາມເງື່ອນໄຂຂອງແຕ່ລະຄົນ.

ການຫລັບຕາ ຊ່ວຍໃຫ້ພວກເຮົາສາມາດມີສະມາທິໃນການອະທິຖານຫລາຍຂຶ້ນ, ແຕ່ໃນບາງສະຖານະການ ກໍ່ບໍ່ຈຳເປັນຕ້ອງຫລັບຕາໃນການອະທິຖານກໍ່ໄດ້

ສິ່ງທີ່ສຳຄັນກໍ່ຄື ການອະທິຖານຂອງພວກເຮົາຕ້ອງເຮັດດ້ວຍຄວາມເຄົາລົບທີ່ພຣະເຈົ້າຊົງສົມຄວນໄດ້ຮັບ







# ອະທິຖານດ້ວຍທ່າທາງທີ່ຖືກຕ້ອງ

"ເມື່ອດານີເອນຮູ້ວ່າໜັງສືຄຳສັ່ງໄດ້ເຊັນລົງໄປແລ້ວ ເພິ່ນກໍກັບຄືນເມືອເຮືອນຂອງຕົນ. ໃນຫ້ອງຊັ້ນເທິງຂອງເຮືອນນັ້ນມີປ່ອງຢ້ຽມຢູ່ສາມປ່ອງປິ່ນໜ້າໃສ່ນະຄອນເຢຣູຊາເລັມ. ຢູ່ທີ່ນັ້ນ ດັ່ງທີ່ເຄີຍປະຕິບັດມາ ດານີເອນໄດ້ຄຸເຂົ່າລົງຕໍ່ໜ້າປ່ອງຢ້ຽມທີ່ໄຂໄວ້. ພາວັນນາອະທິຖານ ແລະ ໂມທະນາຂອບພຣະຄຸນຕໍ່ພຣະເຈົ້າຂອງເພິ່ນ ວັນລະສາມເທື່ອ ດັ່ງທີ່ເພິ່ນເຄີຍປະຕິບັດມາແຕ່ກ່ອນ" (ດນອ 6:10)

ໃນພຣະຄຳພີ ພວກເຮົາພົບກັບຕົວຢ່າງຂອງຜູ້ຄົນທີ່ອະທິຖານໃນຮູບແບບຕ່າງໆ ຕາມສະຖານະການສະເພາະຂອງແຕ່ລະຄົນ



ໂຢຊວຍໄດ້ ອະທິຖານໃນ ຂະນະທີ່ຢືນຢູ່ຕໍ່ ໜ້າປະຊາຊົນ (2ຂຄ. 20:5)



ດາວິດ ນັ່ງຢູ່ຕໍ່ໜ ້າພຣະເຈົ້າໃນ ຂະນະອະທິຖານ (2ຊມອ 7:18)



ກສ ໂຊໂລໂມນ ອະທິຖານໂດຍ ຄຸເຂົ່າ ແລະ ຍົກມື ຂຶ້ນ (1ກສ 8:54)



ປະຊາຊົນກົ້ມລົງ ອະທິຖານຢູ່ທີ່ພື້ນ (ນຣມຢ. 8:6)



ດາວິດ ອະທິຖານ ໃນ ຂະນະທີ່ນອນຢູ່ ເທິງຕຽງ (1ກສ 1:47)



ເນເຮມີຢາ ຢືນ ແລະ ອະທິຖານງຽບໆຕໍ່ໜ້າ ກະສັດ (ນຣມຢ 2:1-4)

ບໍ່ວ່າພວກເຮົາຈະມີຈຸດຢືນແບບໃດ ພຣະຄຳພີໄດ້ກະຕຸ້ນພວກເຮົາໃຫ້ອະທິຖານຢ່າງບໍ່ຢຸດຜ່ອນ(ກລຊ. 4:2) ແລະ ອະທິຖານຢ່າງຕໍ່ເນື່ອງ (ໂຣມ 12:12).



# ເອນົກ



# ຊີວິດແຫ່ງການອະທິຖານ

"ເພິ່ນໄດ້ຕິດຕາມພຣະເຈົ້າໄປຈົນຊົ່ວຊີວິດ ແລ້ວພຣະອົງກໍໄດ້ຊົງຮັບເອົາເພິ່ນໄປຢູ່ນຳ (ປະຖົມມະການ 5:24)



ເອນົກມີຊີວິດຢູ່ໃນຊ່ວງທີ່ເວລາທຸກຍາກລຳບາກ, ເມື່ອຄວາມຊົ່ວຮ້າຍຂອງມະນຸດໃນຍຸກກ່ອນນັ້ນເພີ່ມຂຶ້ນ. ໃນຕອນທີ່ລູກຊາຍຂອງລາວເກີດມາ, ຄວາມເຂົ້າໃຈໃນພຣະເຈົ້າຂອງລາວກໍ່ເພີ່ມຂຶ້ນ, ແລະ ການສົນທະນາກັບພຣະເຈົ້າກໍ່ເຂັ້ມແຂງຂຶ້ນເຊັ່ນກັນ (ປະຖົມມະການ 5:21-24).

ການອະທິຖານເປັນປັດໄຈສຳຄັນໃນຄວາມສຳພັນນັ້ນ. ຍິ່ງວຽກງານຂອງລາວໜັກໜ່ວງແລະເລັ່ງດ່ວນຫລາຍເທົ່າໃດ ການອະທິຖານຂອງລາວກໍ່ຍິ່ງສະໝໍ່າສະເໝີ ແລະ ຮ້ອນແຮງຫລາຍຂຶ້ນເທົ່ານັ້ນ, ບາງຄັ້ງລາວຈະແຍກໂຕເອງໄປສະຖານທີ່ທີ່ມິດງຽບສະຫງົບ ເພື່ອສົນທະນາກັບພຣະເຈົ້າຫລາຍຂຶ້ນ. ຢ່າງໃດກໍ່ຕາມ ລາວກໍ່ກັບມາຫາຜູ້ຄົນສະເໝີ ເພື່ອແບ່ງປັນຄວາມຮູ້ກ່ຽວກັບພຣະເຈົ້າໃຫ້ກັບພວກເຂົາ.



ພຣະເຈົ້າຊົງໄດ້ຍິນພວກເຮົາທ່າມກາງຄວາມວຸ້ນວາຍໃນຊີວິດປະຈຳວັນ ແລະ ໃນຄວາມງຽບສະຫງົບ. ບໍ່ມີສະຖານທີ່ໃດໃນໂລກໃບນີ້ທີ່ພຣະອົງບໍ່ສາມາດເຫັນ ແລະ ໄດ້ຍິນພວກເຮົາ. ພວກເຮົາສາມາດສະແດງການອະທິຖານຂອງພວກເຮົາດ້ວຍຄຳເວົ້າ (ເຊິ່ງຊ່ວຍພວກເຮົາໃຫ້ມີສະມາທິ), ຫລື ພວກເຮົາສາມາດອະທິຖານແບບມິດງຽບ). ເຊິ່ງຊ່ວຍໃຫ້ພວກເຮົາສະແດງຄວາມຄິດຂອງພວກເຮົາ. ສິ່ງສຳຄັນແມ່ນ ຢ່າຢຸດທີ່ຈະສື່ສານກັບພຣະເຈົ້າໃນການອະທິຖານ







# ໂມເຊ

# ໂອ້ລົມກັບພຣະເຈົ້າ

"ໃນອິດສະຣາເອນບໍ່ເຄີຍມີຜູ້ປະກາດພຣະທຳຄົນໃດຄືໂມເຊ ພຣະຜູ້ເປັນເຈົ້າຊົງກ່າວກັບເພິ່ນໜ້າຕໍ່ໜ້າ" (ພບຍສ 34:10)

ເມື່ອຊາວອິດສະຣາເອນໄດ້ຍິນສຽງຂອງພຣະເຈົ້າເວົ້າຈາກພູເຂົາຊີນາຍ, ພວກເຂົາກໍ່ຂໍຮ້ອງຕໍ່ພຣະອົງວ່າ ຢ່າກ່າວກັບພວກເຂົາໂດຍກົງອີກ, ເພາະພວກເຂົາຢ້ານຕາຍ ເພາະສຽງຂອງພຣະອົງ (ອພຍ 20:18-19).



ແຕ່ສຳລັບໂມເຊແລ້ວ ບໍ່ເປັນເຊັ່ນນັ້ນ, ຜູ້ເຊິ່ງກ່າວກັບພຣະເຈົ້າໜ້າຕໍ່ໜ້າ (ພບຍສ 34:10). ເປັນເວລາ 40 ປີ (ຕັ້ງແຕ່ໃນຊ່ວງຢູ່ພຸ່ມໄມ້ທີ່ລຸກໄໝ້ຈົນເຖິງການຕາຍຂອງລາວ), ໂມເຊ ແລະ ພຣະເຈົ້າໄດ້ສົນທະນາເປັນການສ່ວນຕົວຢ່າງເປັນປະຈຳ (ອພຍ 33:9-11).





ພຣະຄຳພີໄດ້ບັນທຶກຊ່ວງເວລາ 40 ນີ້ ຫລາຍຊ່ວງທີ່ພຣະເຈົ້າໄດ້ໃຫ້ຄຳແນະນຳສະເພາະເຈາະຈົງກັບໂມເຊກ່ຽວກັບການສ້າງຫໍເຕັນ ແລະ ຊົງສື່ສານບອກກົດຕ່າງໆແກ່ລາວ, ໃນລະຫວ່າງການສົນທະນາເຫລົ່ານີ້ ໂມເຊຍັງໄດ້ອະທິຖານວິງວອນເພື່ອປະຊາຊົນນຳອີກ.






ສຳລັບພວກເຮົາແລ້ວ ບໍ່ມີໂອກາດທີ່ຈະໄດ້ໂອ້ລົມກັບພຣະເຈົ້າໜ້າຕໍ່ໜ້າ, ແຕ່ການອະທິຖານນັ້ນຊ່ວຍເຕີມເຕັມຊ່ອງຫວ່າງນັ້ນໂດຍໃຫ້ພວກເຮົາສາມາດສື່ສານກັບພຣະອົງໄດ້ໂດຍກົງ



# ອະທິຖານວິງວອນຕໍ່ພຣະອົງ



“ພຣະຜູ້ເປັນເຈົ້າຊົງພຣະພິໂລດອາໂຣນ ພໍທີ່ຈະຂ້າລາວໄດ້ ຂ້າພະເຈົ້າຈຶ່ງໄດ້ອ້ອນວອນເພື່ອລາວໃນຕອນນັ້ນ (ພບຍສ 9:20)

ການວິງວອນອະທິຖານແມ່ນການວິງວອນເພື່ອຄົນອື່ນ (ຢກບ 5:16; ມທ 5:44; 1 ຕມທ 2:1-4).

ໂມເຊໄດ້ອະທິຖານວິງວອນຕໍ່ພຣະເຈົ້າເພື່ອຜູ້ອື່ນໃນຫລາຍໂອກາດ ແລະດ້ວຍເຫດຜົນທີ່ແຕກຕ່າງກັນເຊັ່ນ:

★ ອະທິຖານເພື່ອຄອບຄົວຂອງພວກເຂົາ



* ເພາະບາບຂອງ ອາໂຣນ (ພບຍສ 9:20)



* ເພາະການຈົ່ມຂອງມາລີ (ຈຊບຊ 12:10-13)

★ ອະທິຖານເພື່ອປະຊາຊົນ



* ເມື່ອພວກເຂົາກະຫາຍນ້ຳ (ອພຍ 15:24-25)



* ເມື່ອພວກເຂົາຫິວເຂົ້າ (ຈຊບຊ 11:11-13)



* ເມື່ອພວກເຂົາເຮັດບາບ (ອພຍ 32:30-32)

ແມ່ນຫຍັງແມ່ນແຮງຈູງໃຈໃຫ້ໂມເຊອະທິຖານເພື່ອຄົນອື່ນ?

ສິ່ງດຽວກັນນີ້ຄວນຈະເປັນແຮງຈູງໃຈໃຫ້ແກ່ພວກເຮົາເຊັ່ນກັນ ນັ້ນກໍ່ຄື: ຄວາມຮັກທີ່ມີຕໍ່ຜູ້ທີ່ພວກເຮົາອະທິຖານເພື່ອ.

“ພວກເຮົາຄວນອະທິຖານພາວັນນາເພື່ອຄອບຄົວ, ແລະ ເໜືອສິ່ງອື່ນໃດແມ່ນພວກເຮົາຕ້ອງບໍ່ລະເລີຍການອະທິຖານໃນທີ່ລັບລີ້, ເພາະສິ່ງນີ້ແມ່ນຊີວິດທີ່ແທ້ຈິງຂອງຈິດວິນຍານ, ເຊິ່ງຈິດວິນຍານຈະເຕີບໂຕບໍ່ໄດ້ ຖ້າຫາກວ່າພວກເຮົາລະເລີຍການອະທິຖານ. ການອະທິຖານໃນຄອບຄົວ, ຫລື ໃນທີ່ສາທາລະນະຢ່າງດຽວບໍ່ພຽງພໍໄດ້, ຈະຕ້ອງມີຄວາມງຽບຂອງສະຖານທີ່ ຈະໄດ້ເປີດໃຈໃຫ້ພຣະເຈົ້າໄດ້ຊົງພິຈາລະການຄໍາພາວັນນາອະທິຖານ. ໃນທີ່ລັບລີ້ນັ້ນມີພຽງພຣະເຈົ້າຜູ້ຊົງຟັງຄໍາອະທິຖານຂອງພວກເຮົາເທົ່ານັ້ນທີ່ໄດ້ຍິນ, ບໍ່ມີຜູ້ໃດຢາກຮູ້ຢາກເຫັນທີ່ຈະໄດ້ຮັບຟັງຄໍາອະທິຖານນີ້. ໃນການອະທິຖານໃນທີ່ລັບລີ້ ຈິດວິນຍານຈະເປັນອິດສະຫລະຈາກອິດທິພົນຮອບຂ້າງ, ເປັນອິດສະຫລະຈາກຄວາມຕື່ນເຕັ້ນ ເຊິ່ງຈະເຂົ້າເຖິງພຣະເຈົ້າຢ່າງສະຫງົບສຸກ ແຕ່ດ້ວຍຄວາມສັດທາຢ່າງແຮງກ້າ ອິດທິພົນຈາກພຣະອົງນັ້ນຈະຊົງເປີດຟັງຄໍາອະທິຖານທີ່ເກີດຂຶ້ນຈາກໃຈຂອງພວກເຮົາ.”

EGW (Steps to Christ, p. 98)